# ການລົງບັນຊີປະຈຳວັນຜ່ານການອັບໂຫລດ excel

**<u>ການລົງບັນຊີຜ່ານການອັບໂຫລດ excel</u>**

ການລົງບັນທຶກປະຈຳວັນຖືວ່າເປັນຂັ້ນຕອນທີ່ສຳຄັນໃນການຕິດຕາມກວດກາ ແລະ ສ້າງບົດລາຍງານ ຕ່າງໆ. ການລົງບັນທຶກປະຈຳວັນຈະແບ່ງເປັນ 2 ຂັ້ນຕອນຫຼັກຄື ການບັນທຶກຂໍ້ມູນລວມຂອງບັນຊີຈຳວັນ ແລະ ການບັນທຶກ ໜີ້/ມີ ລະອຽດຂອງການບັນຊີປະຈຳວັນ ການອັບໂຫລດຜ່ານ excel ຈະສະດວກ ແລະ ງ່າຍຂື້ນ ປະຫຍັດເວລາໃນການລົງບັນທຶກບັນຊີ

1. ໃຫ້ກົດໃສ່ເມນູ **ການບັນຊີ** ແລ້ວເລືອກ **ບັນຊີປະຈຳວັນ**




2. ແລ້ວກົດໃສ່ **ສ້າງບັນຊີປະຈຳວັນຜ່ານການອັບໂຫລດ Excel**




3. ດາວໂຫລດ ແບບຟອມ **ເອກະສານຕົວຢ່າງ**




- **ຂ້າມຂັ້ນຕອນການກວດກາ:** ໝາຍເຖິງ ເວລາທີ່ເຮົາອັບໂຫລດ excel ເຂົ້າ ເຮົາຢາກໃຫ້ລະບົບຂ້າມຂັ້ນຕອນອັບເຂົ້າເລີຍ ກົດຕົກລົງ ຫລື ວ່າໃຫ້ກວດກາກ່ອນອັບເຂົ້າ ກົດປະຕິເສດ

4. ຫຼັງຈາກໂຫລດເອກະສານຕົວຢ່າງ ໃຫ້ຕື່ມຕາມແບບຟອມທີ່ໃຫ້

- ລົງໄດ້ 2 ແບບ ຖ້າຮູບນ້ອຍ ສາມາດດາວໂຫລດຕາມລີ້ງ ເພື່ອເບິ່ງແບບຟອມຕົວຢ່າງ https://docs.google.com/spreadsheets/d/1x4UNUthCYzKjDmbOjirPC4rPIL4NDQtF/edit?usp=sharing&ouid=102089332449416999181&rtpof=true&sd=true




**ໝາຍເຫດ:** ຫ້ອງແບບຟອມທີ່ມີເຄື່ອງໝາຍ( * ) ແມ່ນລະບົບບັງຄັບໃຫ້ໃສ່ຂໍ້ມູນ

- **date:** ໝາຍເຖິງ ວັນທີ ເດືອນ ປີ ເປີດນຳໃຊ້ປື້ມປະຈຳວັນ
- **journal_book:** ໝາຍເຖິງ ເລືອກປື້ມບັນຊີປະຈຳວັນ
- **reference:** ໝາຍເຖິງ ເລກອ້າງອີງ
- **debit_code:** ໝາຍເຖິງ ເລກລະຫັດບັນຊີໜີ້
- **debit_name:** ໝາຍເຖິງ ຊື່ເລກລະຫັດບັນຊີໜີ້
- **credit_code:** ໝາຍເຖິງ ເລກລະຫັດບັນຊີມີ
- **credit_name:** ໝາຍເຖິງ ຊື່ເລກລະຫັດບັນຊີມີ
- **description_lo:** ໝາຍເຖິງ ຄຳອະທິບາຍພາສາລາວ
- **description_en:** ໝາຍເຖິງ ຄຳອະທິບາຍພາສາອັງກິດ
- **description_vi:** ໝາຍເຖິງ ຄຳອະທິບາຍພາສາຫວຽດ
- **currency_code:** ໝາຍເຖິງ ສະກຸນເງິນ LAK, THB, USD

- **currency_rate:** ໝາຍເຖິງ ເລດເງິນ LAK:1, THB: 600, USD:20.000
- **amount:** ໝາຍເຖິງ ຈຳນວນເງິນ
- **locked:** ໝາຍເຖິງ ຖ້າຢາກລັອກລາຍການນີ້ ໃສ່ YES ແລະ ຖ້າບໍ່ຕ້ອງການລັອກລາຍການນີ້ໃສ່ NO

5. ຫຼັງຈາກຕື່ມຂໍ້ມູນໃສ່ແບບຟອມຕົວຢ່າງແລ້ວ ໃຫ້ອັບໂຫລດເຂົ້າສູ່ລະບົບ bansi.la ໂດຍ ກົດ **Choose File**




ແລ້ວກົດ **ນຳເຂົ້າ** ຖືວ່າສຳເລັດ




ວີດີໂອ : [https://youtu.be/t8boqaXPZZo?si=-E5FQbYBTI-xVQnU](https://youtu.be/t8boqaXPZZo?si=-E5FQbYBTI-xVQnU)